ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 019! /ກງ

ນະຄອນຫຼວງວຽງຈັນ, ວັນທີ ໒໐ ມັງກອນ ໒໐໒໒

# ແຈ້ງການ

ເຖິງ: ທ່ານຫົວໜ້າ ຫ້ອງການ, ພະແນກ ແລະ ກົມ ຕ່າງໆ ໃນບັນດາອົງການຈັດຕັ້ງຂອງລັດ ຂັ້ນ ເມືອງ, ແຂວງ, ນະຄອນຫຼວງ ແລະ ສູນກາງ ໃນຂອບເຂດທົ່ວປະເທດ

ເລື່ອງ: ຢຸດຕິການການຂາຍໃບເກັບເງິນອາກອນມູນຄ່າເພີ່ມ ເປັນຊຸດ

- ອີງຕາມ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບ(ປັບປຸງ) ເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບ ເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍໃບເກັບເງິນ ສະບັບເລກທີ 12/ນຍ, ລົງວັນທີ 23 ມັງກອນ 2006;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ໜັງສືລາຍງານ ຂອງກົມສ່ວຍສາອາກອນ ສະບັບເລກທີ 0088/ກສອ, ລົງວັນທີ 17 ມັງກອນ 2022.

ກະຊວງການເງິນ ຖືເປັນກຽດແຈ້ງມາຍັງທ່ານຮັບຊາບ ກ່ຽວກັບການຂາຍໃບເກັບເງິນອາກອນມູນຄ່າເພີ່ມເປັນຊຸດ ໃນໄລຍະຜ່ານມາ ໃຫ້ແກ່ຂະແໜງການຕ່າງໆຂອງລັດຂັ້ນຕ່າງໆ ໃນຂອບເຂດທົ່ວປະເທດ ໃນກໍລະນີ ທີ່ເຄື່ອນໄຫວມີລາຍໄດ້ບາງຄັ້ງຄາວ ເປັນຕົ້ນແມ່ນ ການໃຫ້ເຊົ່າ, ການກໍ່ສ້າງ ແລະ ການສະໜອງການບໍລິການ ອື່ນໆ ເຫັນວ່າ ບໍ່ຖືກຕ້ອງ, ບໍ່ສອດຄ່ອງ ຕາມທີ່ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບອາກອນມູນຄ່າເພີ່ມ ໄດ້ກຳນົດໄວ້ ເນື່ອງຈາກອະນຸຍາດໃຫ້ນຳໃຊ້ສະເພາະ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນທຸລະກິດ ແລະ ຈົດທະບຽນຢູ່ໃນລະບົບອາກອນມູນຄ່າເພີ່ມ ເທົ່ານັ້ນ.

ເພື່ອໃຫ້ວຽກງານດັ່ງກ່າວຖືກດຳເນີນໄປ ປົກກະຕິ, ຖືກຕ້ອງ ແລະ ສອດຄ່ອງ ຕາມກົດໝາຍ ກຳນົດ ໃນຕໍ່ໜ້າ.

**ກະຊວງການເງິນ ແຈ້ງການແນະນຳ ດັ່ງນີ້:**

1. ຢຸດຕິ ການຂາຍໃບເກັບເງິນອາກອນມູນຄ່າເພີ່ມເປັນຊຸດ ໃຫ້ແກ່ອົງການຈັດຕັ້ງຂອງລັດຂັ້ນຕ່າງໆ ໃນຂອບເຂດທົ່ວປະ ເທດ ທີ່ບໍ່ໄດ້ສ້າງຕັ້ງເປັນວິສາຫະກິດ ແລະ ບໍ່ໄດ້ຈົດທະບຽນຢູ່ໃນລະບົບອາກອນມູນຄ່າເພີ່ມ;
2. ໃຫ້ຄິດໄລ່ເກັບໃນປະເພດອາກອນລາຍໄດ້ ປ່ຽນແທນອາກອນມູນຄ່າເພີ່ມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 34.12 ແລະ ໃຫ້ຄິດໄລ່ອາກອນລາຍໄດ້ ໃນອັດຕາ 10% ຕາມທີ່ໄດ້ກຳນົດໄວ້ໃນມາດຕາ ມາດຕາ 39 ຂໍ້ທີ 5 ຂີດໝ້າທີ 5 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019;

ກໍລະນີອົງການຈັດຕັ້ງຂອງລັດ ຕ້ອງການສືບຕໍ່ນຳໃຊ້ໃບເກັບເງິນອາກອນມູນຄ່າເພີ່ມ ຕ້ອງຂໍອະນຸຍາດສ້າງຕັ້ງເປັນວິສາຫະກິດ ຈາກ ຂະແໜງອຸດ ສາຫະກຳ-ການຄ້າ ຫຼື ຂະແໜງສົ່ງເສີມການລົງທຶນ ແລະ ຈົດທະບຽນເຂົ້າໃນລະບົບອາ ກອນມູນຄ່າເພີ່ມ ເສຍກ່ອນ ຈຶ່ງຈະໄດ້ ຮັບພິຈາລະນາ ແລະ ອະນຸມັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີ

ບຸນໂຈມ ອຸບົນປະເສີດ